# ການປະເມີນມູນຄ່າທາງເສດຖະກິດຂອງກິດຈະກຳການທ່ຽວທ່ອງພາຍໃນ ແຂວງ ຈຳປາສັກ

ທ. ສີອຳພອນ ພິມມະທຳ[1], ນ. ສຸດສະດາພອນ ສິງສີທາ[2], ທ. ສຸດໃຈ ແກ້ວພາວົງ[3],
ນ. ທິບພາພອນ ຈະເລີນສຸກ[4], ນ. ແກ້ວດວງໃຈ ທາຈັນສີ[5]

## ບົດຄັດຫຍໍ້

ຈຸດປະສົງເພື່ອປະເມີນມູນຄ່າດ້ານເສດຖະກິດຂອງກິດຈະກຳການທ່ອງທ່ຽວ ແລະ ສາເຫດທີ່ພາໃຫ້ນັກທ່ອງທ່ຽວມາທ່ຽວແຂວງຈຳປາສັກ. ກຸ່ມຕົວຢ່າງທັງໝົດ 250 ຕົວຢ່າງ ໃນນັ້ນ, ນັກທ່ອງທ່ຽວພາຍໃນຈຳນວນ 104 ຄົນ ແລະ ນັກທ່ອງທ່ຽວຕ່າງປະເທດ 146 ຄົນ ໂດຍການນຳໃຊ້ແບບສອບຖາມ ແລະ ສຳພາດຕົວຈິງແບບໜ້າເຊິ່ງໜ້າກັບນັກທ່ອງທ່ຽວ. ວິທີການສຶກສາ ແມ່ນໄດ້ນຳໃຊ້ວິທີຕົ້ນທຶນການເດີນທາງ Travel Cost Method (TCM) ແລະ ການວິເຄາະສະຖິຕິພັນລະນາ.

ຜົນການສຶກສາ: ນັກທ່ອງທ່ຽວພາຍໃນພົບວ່າ ການປະເມີນມູນຄ່າທາງດ້ານເສດຖະກິດການທ່ອງທ່ຽວເທົ່າກັບ 1,095,290.25 ກີບ/ຄັ້ງ ເຊິ່ງມູນຄ່າການໃຊ້ຈ່າຍດັ່ງກ່າວແມ່ນເປັນລາຍຮັບຂອງທຸລະກິດການທ່ອງທ່ຽວໂດຍກົງ ແລະ ທຸລະກິດຕິດພັນກັບການທ່ອງທ່ຽວທີ່ກະຈາຍໄປທົ່ວສັງຄົມ ແລະ ເຮັດໃຫ້ເສດຖະກິດໂດຍລວມພາຍໃນແຂວງ ຈຳປາສັກມີທ່າຂະຫຍາຍໃນລະດັບໜຶ່ງ. ນັກທ່ອງທ່ຽວມີຂໍ້ສະເໜີແນະ ຄວນຈັດໃຫ້ມີສະຖານທີ່ນັ່ງພັກຜ່ອນ, ຮອງລົງມາແມ່ນສະເໜີໃຫ້ມີການປັບປຸງຫ້ອງນ້ຳໃຫ້ສະອາດຈົບງາມ, ສະເໜີໃຫ້ເພີ່ມຄວາມເອົາໃຈໃສ່ໃນການຮັກສາຄວາມສະອາດ ແລະ ຄວນມີຄວາມເປັນລະບຽບຮຽບຮ້ອຍ ແລະ ສະເໜີໃຫ້ມີການປັບປຸງເສັ້ນທາງ, ຄວນມີການປັບປຸງສະຖານທີ່ຈອດລົດ, ຕາມລຳດັບ.

ຜົນການສຶກສາ: ນັກທ່ອງທ່ຽວຕ່າງປະເທດ ສ່ວນໃຫຍ່ແມ່ນມາຈາກທະວີບຢູໂຣບກວມເອົາເຖິງ 78.77 ສ່ວນຮ້ອຍ. ການເດີນທາງຂອງນັກທ່ອງທ່ຽວໄລຍະເວລາ 1-5 ວັນ ກວມເອົາອັດຕາສ່ວນ 50 ສ່ວນຮ້ອຍ. ສຳລັບນັກທ່ອງທ່ຽວແແມ່ນມີຄ່າໃຊ້ຈ່າຍໂດຍສະເລ່ຍແມ່ນ 26.83 ໂດລາສະຫະລັດຕໍ່ວັນຕໍ່ຄົນ ແລະ ບາງຄົນອາດຄ່າໃຊ້ຈ່າຍສູງເຖິງ 100 ໂດລາສະຫະລັດ, ນັກທ່ອງທ່ຽວສ່ວນໃຫຍ່ແມ່ນຈາກສະຫະພາບຢູໂຣບ ແລະ ສາເຫດທີ່ພາໃຫ້ນັກທ່ອງທ່ຽວມາທ່ຽວແຂວງຈຳປາສັກ ສ່ວນໃຫຍ່ແມ່ນມັກຄວາມສະຫງົບ ແລະຄວາມປອດໄພ ກວມເອົາ 93.20 ສ່ວນຮ້ອຍ. ກຸ່ມນັກທ່ອງ

---

[1] ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈຳປາສັກ Tel:+85620 55338813
Email: Syamphone.igges@gmail.com
[2] ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈຳປາສັກ Tel:+85620 98606299
Email:singsitha456@gmail.com
[3] ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈຳປາສັກ Tel:+85620 28333391
[4] ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈຳປາສັກ Tel:+85620 92308944
Email:thippaphone@gmail.com
[5] ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈຳປາສັກ Tel:+85620 55272224

ທ່ຽວທີ່ເດີນທາງເຂົ້າມາທ່ຽວແຂວງຈຳປາສັກ ເພື່ອເດີນທາງໄປສີ່ພັນດອນ ເປັນເຂດທີ່ນັກທ່ຽວທ່ຽວໃຫ້ຄວາມສົນໃຈ ກວມເອົາອັດຕາສ່ວນ 87.77 ສ່ວນຮ້ອຍ ຮອງລົງມາແມ່ນມີການຄຸ້ມຄອງຈັດການສິ່ງແວດລ້ອມກວມເອົາ 67.88 ສ່ວນຮ້ອຍ, ຕໍ່ມາແມ່ນ ກຸ່ມນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວແມ່ນເຫັນວ່າເໝາະສົມໃນການເດີນທາງ ກວມເອົາ 87.00 ສ່ວນຮ້ອຍ ແລະ ອີກຈຳນວນໜຶ່ງເຫັນວ່າມີຄ່າໃຊ້ຈ່າຍທີ່ຖືກ ກວມເອົາ 50.77 ສ່ວນຮ້ອຍ. ນອກຈາກນັ້ນ, ຍັງມີເປົ້າໝາຍໄປແຫຼ່ງທ່ອງທ່ຽວມໍລະດົກໂລກວັດພູຈຳປາສັກ ກວມເອົາ 44.5 ສ່ວນຮ້ອຍ ແລະ ມີອີກຈຳນວນໜຶ່ງເຫັນວ່າບໍ່ມີຄວາມແອອັດສະດວກສະບາຍ ກວມເອົາຢູ່ 44.55 ສ່ວນຮ້ອຍ. ຮອງລົງມາແມ່ນມີພູມອາກາດທີ່ດີ ກວມເອົາ 43.8 ສ່ວນຮ້ອຍ ແລະ ມີອີກຈ□ານວນໜຶ່ງທີ່ເດີນທາງເຂົ້າມາທ່ຽວເຫັນວ່າເໝາະສົມແກ່ການຈັດພິທີຕ່າງໆ ກວມເອົາ 43.2 ສ່ວນຮ້ອຍ.

# Estimate economic value of tourism in Champasack province by using travel cost method

Abstract

Tourism plays a vital role in socio-economic development. This study is to evaluate the economic value and the reason why tourists visit Champasack Province. Travel cost method was employed and Descriptive statistics were analyzed with the total sample of 250 tourists, in that 104 were domestic and 146 were foreigners. The economic value of domestic tourists is approximately 1,095,290 LAK per trip, mainly one-day trip and foreigner is about USD 26.83 per day, some people might as high as USD 100 per person per day and mostly 1 – 5 days stay. The majority of tourists were from a European country and the main destination was four thousand islands, Watphou world heritage. The main reason for visiting was peaceful and safe, good existing environment, good for travel and a good place for organizing events, respectively.

## 1. ພາກສະເໜີ

ສປປ ລາວ ໄດ້ເປີດປະຕູສູ່ໂລກພາຍນອກ ແລະຍິນດີຕ້ອນຮັບນັກທ່ອງທ່ຽວຈາກທົ່ວໂລກໃນປີ 1986 ພ້ອມໆກັບການປ່ຽນແປງໃໝ່ອັນສະຫຼາດສ່ອງໃສຂອງ ພັກປະຊາຊົນປະຕິວັດລາວ. ພິເສດ, ສປປ ລາວ ເຮົາຍັງມີຊັບພະຍາກອນທີ່ເປັນທ່າແຮງບົ່ມຊ້ອນທີ່ຍິ່ງໃຫ່ຍອັດສະຈັນຄື ມີຄວາມຫຼາກຫຼາຍທີ່ຍອດຍິ່ງທາງດ້ານວັດທະນະທຳ, ທາງທຳມະຊາດ ແລະ ປະຫວັດສາດ ເຊິ່ງມີທັງໝົດ 1,807 ແຫ່ງ; ໃນນັ້ນ, ມີສະຖານທີ່ທ່ອງທ່ຽວທີ່ເປັນ ມໍລະດົກໂລກຢູ່ 2 ແຫ່ງຄື: ຫລວງພະບາງ ແລະວັດພູຈຳປາສັກ (Sipaseuth, 2014). ສິ່ງທີ່ສຳຄັນຍ້ອນເຮົາມີແຫຼ່ງທ່ອງທ່ຽວທີ່ເປັນມໍລະດົກໂລກ ແລະເປັນສະມາຊິກຂອງອົງການທ່ອງທ່ຽວໂລກ ສາມາດດຶງດູດເອົານັກທ່ອງທ່ຽວໄດ້ເປັນຈຳນວນຫຼາຍ (Phosikham, 2010) 2015 ອັດຕາການເຕີບໂຕຂອງຂະແໜງການທ່ອງທ່ຽວສະເລ່ຍປີລະ 13.90% (Manivong, 2015) ແລະ 2016 ຫຼຸດລົງມາເປັນ 12.66% (BOUNMIXAY, 2016) ແລະໃນປະຈຸບັນລັດຖະບານແຫ່ງ ສປປ ລາວ ໄດ້ຖືເອົາວຽກງານການທ່ອງທ່ຽວເປັນແຜນງານບຸລິມະສິດ 1 ໃນ 11 ແຜນງານບຸລິມະສິດແຫ່ງຊາດ (Sipaseuth, 2014). ຕະຫຼອດໄລຍະຜ່ານມາ ພັກ ແລະລັດຖະບານ ໄດ້ມີນະໂຍບາຍພັດທະນາ ແລະສົ່ງເສີມການທ່ອງທ່ຽວຢ່າງກວ້າງຂວາງເຊິ່ງເປັນຂະແໜງການທີ່ສ້າງລາຍຮັບອັນດັບທີ 1, ເປັນແຫລ່ງເງິນຕາຕ່າງປະເທດທີ່ສຳຄັນ, ສາມາດສ້າງວຽກເຮັດງານທຳເປັນຈຳນວນຫຼາຍ ແລະທີ່ສຳຄັນ ການທ່ອງທ່ຽວຍັງສາມາດຫຼຸດຜ່ອນຄວາມທຸກຍາກ ຂອງປະຊາຊົນໄດ້ອີກດ້ວຍ (Schipani, 2007). ຕະຫຼອດໄລຍະຜ່ານມາ, ປະເທດເຮົາໄດ້ເປີດປີການທ່ອງທ່ຽວເຖິງ 3 ຄັ້ງ ເຮັດໃຫ້ ສປປ ລາວ ເປັນທີ່ຮັບຮູ້ກັນໃນທົ່ວໂລກ ແລະຈຳນວນນັກທ່ອງທ່ຽວສາກົນໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ແລະໄດ້ຮັບການຈັດອັນດັບເປັນເມືອງທີ່ໜ້າໄປທ່ອງທ່ຽວທີ່ສຸດໃນໂລກໃນປີ 2014 (JICA, 2016). ອີງຕາມອົງການທ່ອງທ່ຽວແຫ່ງຊາດ (2016) ຄາດຄະເນວ່າຈະມີນັກທ່ອງທ່ຽວເຂົ້າມາປະເທດເຮົາປະມານ 6 ລ້ານຄົນ ແລະຈະມີມູນຄ່າທາງເສດຖະກິດປະມານ 1,000 ລ້ານໂດລາສະຫະລັດ (LNTA, 2016).

ແຂວງ ຈຳປາສັກ ມີຊາຍແດນ ແລະດ່ານສາກົນ 3 ແຫ່ງທີ່ເປັນປະຕູເຊື່ອມຈອດກັບປະເທດເພື່ອນບ້ານ. ນັກທ່ອງທ່ຽວ ແມ່ນສາມາດຂໍໜັງສືເຂົ້າເມືອງກັບທີ່ໄດ້ຢ່າງສະດວກສະບາຍ. ນອກນັ້ນ, ແຂວງ ຈຳປາສັກ ຍັງເປັນປະຕູທາງຜ່ານອອກສູ່ບັນດາແຂວງພາກໃຕ້ເຊັ່ນ: ສາລະວັນ, ເຊກອງ ແລະ ອັດຕະປືອີກດ້ວຍ. ໃນປີ 2016, ແຂວງດັ່ງກ່າວໄດ້ມີນັກທ່ອງທ່ຽວສາກົນເຂົ້າມາປະມານ 400,000 ຄົນ. ນັບຕັ້ງແຕ່ປີ 2005 ການເຕີບໂຕຂອງຂະແໜງການທ່ອງທ່ຽວໂດຍສະເລ່ຍປະມານ 20% ຕໍ່ປີ ເຊິ່ງນັກທ່ອງທ່ຽວກຸ່ມໃຫຍ່ໆ ແມ່ນມາຈາກ ຣາຊະອານາຈັກໄທ, ສສ ວຽດນາມ, ສສ ເກົາຫຼີ ແລະຈາກແຫຼ່ງອື່ນໆ. ແຂວງ ຈຳປາສັກ ມີເອກະລັກອັນໂດດເດັ່ນເລື່ອງການທ່ອງທ່ຽວຢູ່ຫຼາຍໆຢ່າງເປັນຕົ້ນແມ່ນ: ນະຄອນປາກເຊ ເປັນເມືອງທີ່ເກົ່າແກ່ມີອາຍຸຍາວນານຫຼາຍຮ້ອຍປີ ມີຮ່ອງຮອຍທາງປະຫວັດສາດອັນຍາວໄກ ຕຶກອາຄານເກົ່າແກ່ຖືກອອກແບບປະຕິມະກຳຮູບແບບຝຣັ່ງເສດ ແລະຍັງມີກິ່ນອາຍແບບດັ້ງເດີມຈົນຮອດປະຈຸບັນ, ມີວັດວາອາຮາມເກົ່າແກ່ທີ່ບົ່ງບອກເຖິງຄວາມຈະເລີນຮຸ່ງເຮືອງທາງພຸດທະສາດສະໜາ ແລະ ມີແມ່ນ້ຳຂອງເປັນຈຸດຊົມທິວທັດ ແລະອາກາດສົດຊື່ນຢູ່ຕະຫຼອດ ເໝາະສົມແກ່ການເຮັດກິດຈະກຳຍາມວ່າງແກ່ຊາວເມືອງ ແລະ ຊາວຕ່າງປະເທດ; ປະສາດຫີນວັດພູຈຳປາສັກ ມີອາຍຸ 1,000 ກວ່າປີ ໄດ້ຖືກຮັບຮອງເຂົ້າເປັນມໍລະດົກໂລກ ໂດຍອົງການ UNESCO ໃນປີ 2002 ນັບແຕ່ນັ້ນມາ ມັນໄດ້ກາຍເປັນທີ່ຮູ້ຈັກຂອງຄົນໃນທົ່ວໂລກ. ນອກນັ້ນ, ວັດພູຈຳປາສັກຍັງຄົງຄວາມສັກສິດ ເປັນທີ່ເຄົາລົບບູຊາ ແລະເປັນສູນລວມຈິດໃຈຂອງຄົນລາວທັງປະເທດ; ສີ່ພັນດອນ (4,000 Islands) ມີນ້ຳຕົກຕາດຄອນພະເພັງທີ່ສວຍງາມທີ່ສຸດ ຈົນໄດ້ຂະໜານນາມວ່າ ອັນຍະມະນີແຫ່ງແມ່ນ້ຳຂອງ; ມີປ່າສະຫງວນແຫ່ງຊາດເຖິງສາມແຫ່ງທີ່ເດັ່ນກວ່າໝູ່ແມ່ນປ່າສະຫງວນເຊປຽນທີ່ມີຄວາມອຸດົມສົມບູນດ້ານຊີວະນາໆພັນແຫ່ງໜຶ່ງໃນໂລກ

ແລະແຂວງ ຈຳປາສັກ ຍັງມີພູພຽງບໍລະເວນ ເຂດທີ່ມີຄວາມອຸດົມສົມບູນ ມີອາກາດຊຸ່ມເຢັນຕະຫຼອດປີ ແລະເປັນແຫຼ່ງຜະລິດກາເຟທີ່ມີຄຸນນະພາບທີ່ດີທີ່ສຸດໃນໂລກອີກແຫ່ງໜຶ່ງ.

ໃນປະຈຸບັນ ແຂວງ ຈຳປາສັກ ໄດ້ພັດທະນາລະບົບຄົມມະນາຄົມໃຫ້ເຊື່ອມຈອດກັບປະເທດເພື່ອນບ້ານທັງທາງບົກ ແລະ ອາກາດ ມີລົດໂດຍສານລະຫວ່າງປະເທດ. ການທ່ອງທ່ຽວໄດ້ຮັບການສົ່ງເສີມ ແລະພັດທະນາຈາກຄູ່ຮ່ວມທັງພາຍໃນ ແລະ ຕ່າງປະເທດ. ຮ້ານອາຫານ, ບ້ານພັກ ໂຮງແຮມ ແລະ ສະຖານທີ່ທ່ອງທ່ຽວຕ່າງໆ ແມ່ນມີຄວາມພ້ອມ. ແຕ່ເຖິງຢ່າງໃດກໍ່ຕາມ, ການເປັນເຈົ້າບ້ານທີ່ດີ ມີວິໄນ ບໍ່ເອົາປຽບແຂກຕ່າງປະເທດ ທີ່ມາທ່ຽວຖືເປັນສິ່ງສຳຄັນທີ່ສຸດ. ການເປັນເຈົ້າພາບທີ່ດີເຮັດແນວໃດ ໃຫ້ນັກທ່ອງທ່ຽວຢາກກັບມາທ່ຽວຊ້ຳອີກ ຫຼື ພາຄອບຄົວ ຫຼື ແນະນຳໝູ່ເພື່ອນໃຫ້ມາທ່ຽວອີກເປັນເລື່ອງທີ່ຄວນເອົາໃຈໃສ່. ສະຫຼຸບແລ້ວຄື ເມື່ອນັກທ່ອງທ່ຽວມາທ່ຽວແລ້ວເຂົາບໍ່ຢາກກັບຢາກຢູ່ດົນໆນານໆ ທັງຫຼາຍທັງປ່ວງເລົ່ານັ້ນຄືຜົນປະໂຫຍດອັນມະຫາສານທາງເສດຖະກິດຄື ມັນໄດ້ສ້າງວຽກເຮັດງານທຳ, ກະຈາຍລາຍໄດ້ລົງສູ່ຊຸມຊົນ ແລະເປັນແຫຼ່ງເງິນຕາຕ່າງປະເທດເປັນຈຳນວນຫຼວງຫຼາຍອີກດ້ວຍ ເຖິງແມ່ນວ່າແຫຼ່ງທ່ອງທ່ຽວທຳມະຊາດ ໃນແຂວງ ຈຳປາສັກ ເປັນທີ່ນິຍົມຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ປະຊາຊົນໃນເຂດດັ່ງກ່າວໄດ້ຮັບຜົນປະໂຫຍດໂດຍກົງຈາກການໃຫ້ບໍລິການດ້ານການທ່ອງທ່ຽວ ແລະ ເປັນການຫຼັ່ງໄຫລເຂົ້າຂອງເງິນຕາຕ່າງປະເທດທີ່ສຳຄັນແຫຼ່ງໜຶ່ງ ແລ້ວກໍ່ຕາມ ແຕ່ໄລຍະຜ່ານມາຍັງບໍ່ທັນມີໃຜໄດ້ດຳເນີນການສຶກສາກ່ຽວກັບ ການປະເມີນຄ່າໃຊ້ຈ່າຍຂອງນັກທ່ອງທ່ຽວຕ່າງປະເທດ ພາຍໃນສະຖານທີ່ທ່ອງທ່ຽວແຫຼ່ງຕ່າງໆ ພາຍໃນແຂວງ ຈຳປາສັກ.

## 2. ຈຸດປະສົງຂອງການສຶກສາ

2.1 ເພື່ອປະເມີນມູນຄ່າດ້ານເສດຖະກິດຂອງກິດຈະກຳການທ່ອງທ່ຽວທີ່ແຂວງ ຈຳປາສັກ ໄດ້ຮັບປະໂຫຍດ.

2.2 ສາຫາທີ່ເຮັດໃຫ້ນັກທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ມາທ່ຽວແຂວງຈຳປາສັກ.

## 3. ຂອບເຂດການສຶກສາ

ໃນການສຶກສາຄັ້ງນີ້ແມ່ນຈະສຶກສາກ່ຽວກັບການປະເມີນມູນຄ່າທາງເສດຖະກິດໂດຍວິທີຄ່າໃຊ້ຈ່າຍຈາກການເດີນທາງຂອງນັກທ່ອງທ່ຽວພາຍໃນປະເທດ ແລະ ຕ່າງປະເທດ ເພື່ອວັດມູນຄ່າທາງເສດຖະກິດຂອງແຫຼ່ງທ່ອງທ່ຽວພາຍໃນແຂວງ ຈຳປາສັກ ເຊິ່ງການສຶກສາ ແມ່ນໄດ້ນຳໃຊ້ແບບສອບຖາມລົງສຳຫຼວດຂໍ້ມູນຕົວຈິງກັບນັກທ່ອງທ່ຽວທີ່ມາທ່ຽວຊົມແຂວງຈຳປາສັກໃນຊ່ວງວັນທີ 15/2-30/04/2019 ໂດຍກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ມີຈຳນວນ 250 ຄົນ ນັກທ່ອງທ່ຽວພາຍໃນ ຈຳນວນ 104 ຄົນ ແລະ ນັກທ່ອງທ່ຽວຕ່າງປະເທດ 146 ຄົນ.

**ການເກັບກຳຂໍ້ມູນ:** ໃນການເກັບກຳຂໍ້ມູນຄັ້ງນີ້ ນັກຄົ້ນຄວ້າໄດ້ຍ່າງສຳຫຼວດໂດຍໃຊ້ແບບສອບຖາມສຳພາດໜ້າເຊິ່ງໜ້າກັບນັກທ່ອງທ່ຽວຕາມສະຖານທີ່ສຳຄັນເຊັ່ນ: ບ້ານພັກ-ໂຮງແຮມ, ຮ້ານອາຫານ, ສະຖານທີ່ທ່ອງທ່ຽວ (ປະສາດຫີນວັດພູຈຳປາສັກ, ສະຖານທີ່ທ່ອງທ່ຽວເມືອງປາກຊ່ອງ, ຄອນພະເພັງ, ບ້ານຄອນດອນເດດ) ແລະສະໜາມບິນ ນອກຈາກນີ້, ທີມງານຄົ້ນຄວ້າຍັງໄດ້ ລົງສຳຫຼວດ - ສັງລວມ ແຫຼ່ງທ່ອງທ່ຽວ ແລະສ້າງກຸ່ມສົນທະນາກັບຊາວບ້ານ, ຜູ້ປະກອບການບ້ານພັກ, ໂຮງແຮມ, ຜູ້ປະກອບການລົດໂດຍສານ ແລະເຮືອໂດຍສານ.

## 4. ວິທີດຳເນີນການສຶກສາ

4.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນນັກທ່ອງທ່ຽວທີ່ຢູ່ພາຍໃນປະເທດ ຈຳນວນ 104 ຄົນ ແລະ ຕ່າງປະເທດ ຈຳນວນ 146 ຄົນ ທີ່ເດີນທາງເຂົ້າມາທ່ຽວແຫຼ່ງທ່ອງທ່ຽວແຂວງຈຳປາສັກ ໃນການສຶກສາຄັ້ງນີ້ໄດ້ມີການຄົ້ນຄວ້າ ແລະ ອ່ານງານວິໄຈຂອງເຂົາເຈົ້າຜ່ານການອ່ານ ແລະ ຄົ້ນຄວ້າຂໍ້ມູນເຫັນວ່າ: S. Mohammadi Limaei and N.Yamini. (2014) ແລະ ອັນນິດາ ຣັດຕະນະພັນ (2005: 81-84) ຖ້າປຽບທຽບໃສ່ກັບການອ່ານຂໍ້ມູນການວິໄຈຂອງເຂົາເຈົ້າແລ້ວ ຈຳນວນກຸ່ມຕົວຢ່າງ 140 ຈຶ່ງຖືວ່າຢູ່ໃນລະດັບປານກາງບໍ່ສູງເກີນໄປແຕ່ຢູ່ໃນລະຫວ່າງທີ່ເໝາະສົມ ແລະ ຍອມຮັບໄດ້.

4.2 ເຄື່ອງມືທີ່ໃຊ້ໃນການສຶກສາ

ສຳລັບການຄົ້ນຄ້ວາວິໄຈໃນຄັ້ງນີ້ແມ່ນໄດ້ນຳໃຊ້ແບບສອບຖາມ ເປັນເຄື່ອງມືໃນການເກັບກຳລວບລວມຂໍ້ມູນ ສາມາດແບ່ງແບບສອບຖາມອອກເປັນ 4 ພາກສ່ວນ ດັ່ງນີ້:

- ສ່ວນທີ 1 ລັກສະນະ ແລະ ຈຸດປະສົງຂອງການເດີນທາງໃນການມາທ່ອງທ່ຽວ
- ສ່ວນທີ 2 ຄວາມຄິດເຫັນຕໍ່ແຮງຈູງໃຈເດີນທາງມາທ່ຽວໃນແຂວງຈຳປາສັກ
- ສ່ວນທີ 3 ຂໍ້ມູນສ່ວນບຸກຄົນທີ່ໃຫ້ສຳພາດໃນການມາທ່ອງທ່ຽວ
- ສ່ວນທີ 4 ຂໍ້ສະເໜີເພື່ອເປັນການປັບປຸງແຫຼ່ງທ່ອງທ່ຽວຂອງແຂວງຈຳປາສັກ

5. ວິທີການວິເຄາະຂໍ້ມູນ

5.1 ວິທີວິເຄາະຂໍ້ມູນນັກທ່ອງທ່ຽວພາຍໃນປະເທດ

ໃນການສຶກສາຄັ້ງນີ້ ແມ່ນໄດ້ນຳໃຊ້ ວິທີການປະເມີນຄ່າໃຊ້ຈ່າຍການເດີນທາງເປັນລາຍບຸກຄົນ (Individual Travel Cost Method) ຄືຈະໄດ້ ນັບເອົາຈຳນວນຄັ້ງທີ່ໄປທ່ຽວ (Count number) ເຊິ່ງຢ່າງໜ້ອຍແມ່ນໜຶ່ງຄັ້ງຂຶ້ນໄປເປັນຕົວປ່ຽນຕາມ (V) ແລະ ຕົ້ນທຶນໃນການເດີນທາງ (TC) ເຊິ່ງເຮົາຂຽນສົມຜົນຖົດຖອຍໄດ້:

- $r = f(TC)$ Eq (1)

- ມູນຄ່າການທ່ອງທ່ຽວແມ່ນ ຜົນບວກຂອງສ່ວນເກີນຜູ້ບໍລິໂພກຂອງ ນັກທ່ອງທ່ຽວແຕ່ລະລາຍບຸກຄົນເຂົ້າກັນ ເຊິ່ງຢູ່ຮູບແບບຂອງຕຳລາອຸປະສົງ (Demand function). ຂໍ້ມູນດັ່ງກ່າວແມ່ນໄດ້ມາຈາກການເກັບຂໍ້ມູນຈາກການໃຊ້ຈ່າຍຕົວຈິງໃນການເດີນທາງ ໂດຍກຳນົດໃຫ້ລາຄາ $TC_0$ ບໍ່ມີກຳນົດ ແລະເຮົາສາມາດຊອກຫາສ່ວນເກີນຂອງຜູ້ບໍລິໂພກໄດ້ລຸ່ມນີ້:

$$CS = \int_{TC_0}^{\infty} r(TCr)dTC \text{ ຫຼື } CS = -\frac{\lambda}{\beta} \text{ ເຊິ່ງໂດຍທົ່ວໄປກຳນົດ } \lambda = 1 \qquad \text{Eq} \quad (2)$$

ສຳລັບແບບຈຳລອງທີ່ໃຊ້ເພື່ອຊອກຫາປັດໄຈທີ່ເຮັດໃຫ້ນັກທ່ອງທ່ຽວມາທ່ຽວ ແຂວງ ຈຳປາສັກ ລຸ່ມນີ້:

$$r. = \exp(\alpha_0 + \beta TC_i + e) \qquad \text{Eq} \quad (3)$$

ຫຼື ເມື່ອເຮົາເອົາ log ເຂົ້າທັງສອງເບື້ອງເຮົາກໍ່ຈະໄດ້

$$\log(r) = \alpha_0 + \beta TCr + e$$

ພາຍຫຼັງໄດ້ ຄ່າພາລາແມັດເຕີ ອານຟາ ແລະ ເບຕາ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິແລ້ວ ພວກເຮົາສາມາດປະເມີນຄ່າໃຊ້ຈ່າຍຈາກການເດີນທາງໄດ້ດ້ວຍສົມຜົນລຸ່ມນີ້:

$$\text{TCr} = 1/-\beta$$

$\beta$ : ໝາຍເຖິງຄ່າໃຊ້ຈ່າຍທັງໝົດຈາກການເດີນທາງ

5.2 ວິທີວິເຄາະຂໍ້ມູນນັກທ່ອງທ່ຽວຕ່າງປະເທດ

**ການວິເຄາະຂໍ້ມູນແບບຄຸນນະພາບ**: ຂໍ້ມູນທົ່ວໄປຂອງກຸ່ມຕົວຢ່າງທີ່ມາທ່ຽວແຂວງຈຳປາສັກໂດຍໃຊ້ການວິເຄາະແບບສະຖິຕິແບບພັນລະນາ (Descrptive statistic) ເຊັ່ນ: ຄ່າຄວາມຖີ່ (Frequency), ສ່ວນຮ້ອຍ (Percentage) ແລະ ນຳສະເໜີໃນຮູບແບບຂອງຕາຕະລາງເພື່ອອະທິບາຍຜົນຂອງຂໍ້ມູນ.

Nachmais & Chava. (1981) ໄດ້ກຳນົດເກນໃນການໃຫ້ຄະແນນໄດ້ແບ່ງອອກເປັນ 5 ລະດັບຄື: 1 ລະດັບຄວາມເພິ່ງພໍໃຈໜ້ອຍທີ່ສຸດ, 2 ລະດັບຄວາມເພິ່ງພໍໃຈໜ້ອຍ, 3 ລະດັບຄວາມເພິ່ງພໍໃຈປານກາງ, 4 ລະດັບຄວາມເພິ່ງພໍໃຈຫຼາຍ, 5 ລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ:

| ຄະແນນສະເລ່ຍ | ຄວາມໝາຍ |
|---|---|
| 4.51-5.00 | ລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ |
| 3.51-4.50 | ລະດັບຄວາມເພິ່ງພໍໃຈຫຼາຍ |
| 2.51-3.50 | ລະດັບຄວາມເພິ່ງພໍໃຈປານກາງ |
| 1.50-2.50 | ລະດັບຄວາມເພິ່ງພໍໃຈໜ້ອຍ |
| 1.00-1.50 | ລະດັບຄວາມເພິ່ງພໍໃຈໜ້ອຍທີ່ສຸດ |

**6. ຜົນຂອງການສຶກສາ**

**6.1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ (ນັກທ່ອງທ່ຽວພາຍໃນ)**

- ເພດຂອງຜູ້ຕອບແບບສອບຖາມ

ຜູ້ໃຫ້ຂໍ້ມູນສ່ວນຫຼາຍແມ່ນນັກທ່ອງທ່ຽວທີ່ເປັນເພດຊາຍເຊິ່ງມີຈຳນວນເຖິງ 63 ຄົນ ກວມເອົາອັດຕາສ່ວນ 60.60 ສ່ວນຮ້ອຍ,ຮອງລົງມາແມ່ນນັກທ່ອງທ່ຽວທີ່ເປັນເພດຍິງມີຈຳນວນ 41 ຄົນ ກວມເອົາອັດຕາສ່ວນ 39.40 ສ່ວນຮ້ອຍ ຂອງກຸ່ມຕົວຢ່າງທັງໝົດ.

- ອາຍຸຂອງນັກທ່ອງທ່ຽວ

ຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນມີອາຍຸຢູ່ລະຫ່ວາງ 21 - 30 ປີ ເຊິ່ງມີຈຳນວນເຖິງ 38 ຄົນ ກວມເອົາອັດຕາສ່ວນ 36.50 ສວ່ນຮ້ອຍ, ຮອງລົງມາແມ່ນມີອາຍຸລະຫວ່າງ 31 - 40 ປີ ເຊິ່ງມີຈຳນວນ 36 ຄົນ ກວມເອົາອັດຕາສ່ວນ 34.6໐ ສ່ວນຮ້ອຍ, ສຳລັບຜູ້ທີ່ມີອາຍຸລະຫວ່າງ 41 - 50 ປີ ເຫັນວ່າມີຈຳນວນ 11 ຄົນ ກວມເອົາອັດຕາສ່ວນ 10.60 ສ່ວນຮ້ອຍ, ຜູ້ທີ່ມີອາຍຸໃນລະຫວ່າງ 20 ປີ ລົງມາ ມີຈຳນວນ 10 ຄົນ ກວມເອົາອັດຕາສ່ວນ 9.6໐ ສ່ວນຮ້ອຍ, ຜູ້ທີ່ທີ່ມີອາຍຸລະຫວ່າງ 51-60 ປີ ມີຈຳນວນ 5 ຄົນ ກວມເອົາອັດຕາສ່ວນ 4.80 ສ່ວນຮ້ອຍ ແລະ ຜູ້ທີ່ມີອາຍຸລະຫວ່າງ 61 ປີ ຂຶ້ນໄປມີຈຳນວນ 4 ຄົນ ກວມເອົາອັດຕາສ່ວນ 3.80 ສ່ວນຮ້ອຍ ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ສະຖານະພາບຂອງນັກທ່ອງທ່ຽວ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນມີສະຖານະພາບເປັນຄົນໂສດ ເຊິ່ງມີຈຳນວນເຖິງ 54 ຄົນ ກວມເອົາອັດຕາສ່ວນ 51.90 ສ່ວນຮ້ອຍ, ຮອງລົງມາແມ່ນ ຜູ້ທີ່ມີສະຖານະພາບແຕ່ງງານແລ້ວ ເຊິ່ງມີຈຳນວນ 50 ຄົນ ກວມເອົາອັດຕາສ່ວນ 48.10 ສ່ວນຮ້ອຍ ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ອາຊີບຂອງຜູ້ຕອບແບບສອບຖາມ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມວັດພູມີອາຊີບເປັນພະນັກງານລັດ ເຊິ່ງຈຳນວນ 33 ຄົນ ກວມເອົາອັດຕາສ່ວນ 31.70 ສ່ວນຮ້ອຍ,ຮອງລົງມາແມ່ນອາຊີບນັກຮຽນນັກສຶກສາ ມີຈຳນວນ 30 ຄົນ ກວມເອົາອັດຕາສ່ວນ 28.80 ສ່ວນຮ້ອຍ, ສຳລັບອາຊີບຄ້າຂາຍ/ທຸລະກິດ ແມ່ນມີຈຳນວນ 21 ຄົນ ກວມເອົາອັດຕາສ່ວນ 20.20 ສ່ວນຮ້ອຍ, ຜູ້ທີ່ມີອາຊີບເປັນພະນັກງານເອກະຊົນມີຈຳນວນ 8 ຄົນ ກວມເອົາອັດຕາສ່ວນ 7.70 ສ່ວນຮ້ອຍ, ຜູ້ທີ່ມີອາຊີບແມ່ບ້ານ/ພໍ່ບ້ານ ມີຈຳນວນ 5 ຄົນ ກວມເອົາອັດຕາສ່ວນ 4.80 ສ່ວນຮ້ອຍ ແລະ ຜູ້ທີ່ມີອາຊີບອື່ນໆ ມີຈຳນວນ 7 ຄົນ ກວມເອົາອັດຕາສ່ວນ 6.70 ສ່ວນຮ້ອຍ ຂອງຈຳນວນຕົວຢ່າງທັງໝົດ.

- ລາຍໄດ້ຕໍ່ເດືອນຂອງຜູ້ຕອບແບບສອບຖາມ

ລາຍໄດ້ຂອງຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນມີລາຍໄດ້ 1,000,001-2,000,000 ກີບ/ເດືອນ ເຊິ່ງມີເຖິງ 52 ຄົນ ກວມເອົາອັດຕາສ່ວນ 50.0໐ ສ່ວນຮ້ອຍ,ຮອງລົງມາແມ່ນຜູ້ທີ່ມີລາຍໄດ້ 2,000,001-3,000,000 ກີບ/ເດືອນ ມີຈຳນວນ 34 ຄົນ ກວມເອົາອັດຕາສ່ວນ 32.70 ສ່ວນຮ້ອຍ, ຖັດມາແມ່ນ 3,000,001-4,000,000 ກີບ/ເດືອນ ເຊິ່ງມີຈຳນວນ 11 ຄົນ ກວມເອົາ ອັດຕາສ່ວນ 10.6໐ ສ່ວນຮ້ອຍ ແລະ ຜູ້ທີ່ມີລາຍໄດ້ 4,000,001-5,000,000 ກີບ/ເດືອນ ແມ່ນມີຈຳນວນ 4 ຄົນ ກວມເອົາອັດຕາສ່ວນ 3.80 ສ່ວນຮ້ອຍ ຂອງຈຳນວນຜູ້ຕອບແບບສອບຖາມທັງໝົດ.

**6.2 ຂໍ້ມູນກ່ຽວກັບການທ່ອງທ່ຽວ (ນັກທ່ອງທ່ຽວພາຍໃນ)**

- ທີ່ຢູ່ອາໃສຂອງນັກທ່ອງທ່ຽວພາຍໃນ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນມາຈາກ ແຂວງ ຈຳປາສັກ ເຊິ່ງມີຈຳນວນເຖິງ 30 ຄົນ ກວມເອົາອັດຕາສ່ວນ 28.80 ສ່ວນຮ້ອຍ, ຮອງລົງມາແມ່ນມາຈາກແຂວງ ສະຫວັນນະເຂດ ມີຈຳນວນເຖິງ 14 ຄົນ ກວມເອົາ 13.50 ສ່ວນຮ້ອຍ, ມາຈາກ ແຂວງ ສາລະວັນ ມີຈຳນວນເຖິງ 13 ຄົນ ກວມເອົາ 12.50 ສ່ວນຮ້ອຍ, ມາຈາກ ແຂວງ ຄຳມ່ວນ ແມ່ນມີຈຳນວນ 10 ຄົນ ກວມເອົາ 9.60 ສ່ວນຮ້ອຍ, ສ□າລັບນັກທ່ອງທ່ຽວທີ່ມາຈາກ ນະຄອນຫລວງວຽງຈັນ ແມ່ນມີຈຳນວນ 8 ຄົນ ກວມເອົາ 7.70 ສ່ວນຮ້ອຍ, ມາຈາກແຂວງ ອັດຕະປື ມີຈຳນວນ 7 ຄົນ ກວມເອົາ 6.70 ສ່ວນຮ້ອຍ, ມາຈາກ ແຂວງ ວຽງຈັນ ມີຈຳນວນ 7 ຄົນ ກວມເອົາ 6.70 ສ່ວນຮ້ອຍ, ມາຈາກ ແຂວງ ຫຼວງພະບາງ ແມ່ນມີຈຳນວນ 5 ຄົນກວມເອົາ 4.80 ສ່ວນຮ້ອຍ, ມາຈາກ ແຂວງ ໄຊຍະບູລີ ມີຈ□ານວນເຖິງ 4 ຄົນ ກວມເອົາ 3.80 ສ່ວນຮ້ອຍ, ມາຈາກ ແຂວງ ຫົວພັນ ມີຈຳນວນ 3 ຄົນກວມເອົາ 2.90 ສ່ວນຮ້ອຍ, ມາຈາກ ແຂວງ ບໍລິຄຳໄຊ ມີຈຳນວນ 1 ຄົນກວມເອົາ 1.00 ສ່ວນຮ້ອຍ, ມາຈາກ ແຂວງ ເຊກອງ ມີຈຳນວນ 1 ຄົນ ກວມເອົາ 1.00 ສ່ວນຮ້ອຍ, ມາຈາກແຂວງ ໄຊຍະບູລີ ມີຈຳນວນ 1 ຄົນ ກວມເອົາ 1.00 ສ່ວນຮ້ອຍ ແລະ ມາຈາກ ແຂວງ ຫຼວງນ້ຳທາ ແມ່ນມີຈຳນວນ 1 ຄົນ ກວມເອົາ 1.00 ສ່ວນຮ້ອຍ ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ໄລຍະເວລາມາທ່ອງທ່ຽວ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງ ຈຳປາສັກໃນໄລຍະ 1-2 ວັນ ເຊິ່ງມີ ຈຳນວນເຖິງ 61 ຄົນ ກວມເອົາອັດຕາສ່ວນ 58.65 ສ່ວນຮ້ອຍ, ຖັດລົງມາແມ່ນນັກທ່ອງທ່ຽວທີ່ມາໄລຍະ 3- 4 ວັນ ເຊິ່ງມີຈຳນວນ 26 ຄົນ ກວມອັດຕາສ່ວນ 25.00 ສ່ວນຮ້ອຍ, ສຳລັບນັກທ່ອງທ່ຽວທີ່ມາທ່ຽວໄລຍະ 5-7 ວັນ ແມ່ນມີຈຳນວນ 17 ຄົນ ກວມເອົາອັດຕາສ່ວນ 16.35 ສ່ວນຮ້ອຍ ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ແຜນມາພັກຢູ່ແຂວງຈຳປາສັກຂອງນັກທ່ອງທ່ຽວ

ຜູ້ຕອບແບບສອບຖາມສ່ວນໃຫຍ່ທີ່ມາພັກເຊົາໃນໂຮງແຮມ/ຣີສອດ ເຫັນວ່າມີຈຳນວນ 64 ຄົນ ເຊິ່ງກວມເອົາອັດຕາສ່ວນ 61.54 ສ່ວນຮ້ອຍ, ຮອງລົງແມ່ນ ນັກທ່ອງທ່ຽວທີ່ມາພັກເຮືອນພີ່ນ້ອງ,ມີຈຳນວນ 40 ຄົນ ກວມເອົາອັດຕາສ່ວນ 38.46 ຂອງຈຳນວນນັກທ່ອງທ່ຽວທັງໝົດ.

- ຄ່າພັກເຊົາໃນການມາທ່ອງທ່ຽວ

ນັກທ່ອງທ່ຽວທີ່ມາພັກເຊົາມີຄ່າໃຊ້ຈ່າຍແຕ່ 100,001 – 150,000 ກີບ ແມ່ນມີຈຳນວນ 37 ຄົນ ກວມເອົາອັດຕາສ່ວນ 57.81 ສ່ວນຮ້ອຍ, ຮອງລົງມາແມ່ນຄ່າໃຊ້ຈ່າຍໃນລາຄາ 50,000-100,000 ກີບ ເຊິ່ງມີຈຳນວນ 25 ຄົນ ກວມເອົາອັດຕາສ່ວນ 39.06 ສ່ວນຮ້ອຍ ສຳລັບນັກທ່ອງທ່ຽວທີ່ໃຊ້ຈ່າຍໃນລາຄາ 150.001-200,000 ກີບ ແມ່ນມີຈຳນວນ 2 ຄົນ ກວມເອົາອັດຕາສ່ວນ 3.13 ສ່ວນຮ້ອຍ ແລະ ນັກທ່ອງທ່ຽວອີກຈຳນວນ 50 ຄົນແມ່ນພັກເຊົາບ່ອນອື່ນໆ ຂອງກຸ່ມຕົວຢ່າງທັງໝົດ.

- ຈຳນວນຄັ້ງໃນການເດີນທາງມາທ່ອງທ່ຽວແຂວງຈຳປາສັກໃນຮອບ 1 ປີ

ນັກທ່ອງທ່ຽວທີ່ເດີນທາງມາທ່ຽວແຂວງຈຳປາສັກໃນຮອບ 1 ປີ  1 – 2 ຄັ້ງ ເຊິ່ງມີຈຳນວນ 96 ຄົນ ກວມເອົາອັດຕາສ່ວນ 92.31 ສ່ວນຮ້ອຍ ແລະ ນັກທ່ອງທ່ຽວທີ່ມາທ່ຽວ 3-4 ຄັ້ງ ແມ່ນມີຈຳນວນ 8 ຄົນ ກວມເອົາ 7.69 ສ່ວນຮ້ອຍ ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ການໄດ້ຮັບແຫຼ່ງຂໍ້ມູນຂ່າວສານຂອງນັກທ່ອງທ່ຽວ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງຈຳປາສັກ ໄດ້ຮັບຂໍ້ມູນຂ່າວສານຈາກແຫຼ່ງອື່ນໆ ເຊິ່ງມີຈຳນວນເຖິງ 64 ຄົນ ກວມເອົາ 61.50 ສ່ວນຮ້ອຍ, ຮອງລົງມາແມ່ນ ໄດ້ຮັບຂໍ້ມູນຂ່າວສານຈາກອິນເຕີເນັດ ເຊິ່ງມີຈຳນວນ 17 ຄົນ ກວມເອົາ 16.40 ສ່ວນຮ້ອຍ, ສຳລັບຜູ້ທີ່ໄດ້ຮັບຂໍ້ມູນຂ່າວສານ ຈາກເພື່ອນ/ພີ່ນ້ອງ ເຊິ່ງມີຈຳນວນ 11 ຄົນ ກວມເອົາ 10.60 ສ່ວນຮ້ອຍ,  ໄດ້ຮັບຂໍ້ມູນຂ່າວສານຈາກວິທະຍຸ/ໂທລະພາບແມ່ນມີຈຳນວນ 5 ຄົນ ກວມເອົາ 4.80 ສ່ວນຮ້ອຍ, ຈາກໜັງສືພິມ ມີຈຳນວນ 4 ຄົນ ກວມເອົາ 3.80 ສ່ວນຮ້ອຍ ແລະ ຈາກວາລະສານ/ຄູ່ມືເດີນທາງ ມີຈຳນວນ 3 ຄົນ ກວມເອົາ 2.90 ສ່ວນຮ້ອຍ ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ປະເພດຂອງແຫຼ່ງທ່ອງທ່ຽວທີ່ນັກທ່ອງທ່ຽວມັກ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງຈຳປາສັກ ໂດຍມັກທ່ອງທ່ຽວທາງປະຫວັດສາດ ເຊິ່ງມີຈຳນວນເຖິງ 66 ຄົນກວມເອົາອັດຕາສ່ວນ 63.50 ສ່ວນຮ້ອຍ, ຮອງລົງມາແມ່ນ ມັກທ່ອງທ່ຽວທາງວັດທະນະທຳ ເຫັນວ່າມີຈຳນວນ 29 ຄົນ ກວມເອົາ 27.90 ສ່ວນຮ້ອຍ ແລະ ມັກທ່ອງທ່ຽວແບບທຳມະຊາດແມ່ນ ມີຈຳນວນເຖິງ 9 ຄົນ ກວມເອົາ 8.60 ສ່ວນຮ້ອຍ  ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ຈຸດປະສົງໃນການໄປທ່ອງທ່ຽວແຂວງ ຈຳປາສັກ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງຈຳປາສັກ ໂດຍມີຈຸດປະສົງເພື່ອການ ພັກຜ່ອນ/ທ່ອງທ່ຽວ ເຊິ່ງມີຈຳນວນເຖິງ 62 ຄົນກວມເອົາອັດຕາສ່ວນ 59.60 ສ່ວນຮ້ອຍ, ຮອງລົງມາແມ່ນມີຈຸດປະສົງ ເພື່ອທັດສະນະສຶກສາ ເຊິ່ງມີຈຳນວນ 21 ຄົນ ກວມເອົາອັດຕາສ່ວນ 20.20 ສ່ວນຮ້ອຍ, ສຳລັບຈຸດປະສົງທ່ອງທ່ຽວເພື່ອ ຢ້ຽມຢາມພີ່ນ້ອງ ແມ່ນມີຈຳນວນເຖິງ 11 ຄົນ ກວມເອົາ 10.60 ສ່ວນຮ້ອຍ, ຈຸດປະສົງເພື່ອວຽກງານທາງການ ມີຈຳນວນ 3 ຄົນ ກວມເອົາ 2.90 ສ່ວນຮ້ອຍ, ຈຸດປະສົງເພື່ອວຽກງານທຸລະກິດ ມີຈຳນວນ 3 ຄົນ ກວມເອົາ 2.90 ສ່ວນຮ້ອຍ, ເພື່ອປະຊຸມ/ສຳມະນາ ມີຈຳນວນ 1 ຄົນ ກວມເອົາ 1.00 ສ່ວນຮ້ອຍ ແລະ ຈຸດປະສົງອື່ນໆເຫັນວ່າມີຈຳນວນ 3 ຄົນ ກວມເອົາ 2.90 ສ່ວນຮ້ອຍ ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ລັກສະນະການເດີນທາງຂອງນັກທ່ອງທ່ຽວ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງຈຳປາສັກ ໂດຍເດີນທາງມາແບບຄອບຄົວ ເຊິ່ງມີຈຳນວນເຖິງ 55 ຄົນກວມເອົາ ອັດຕາສ່ວນ 52.90 ສ່ວນຮ້ອຍ, ຮອງລົງມາແມ່ນມາແບບໝູ່ຄະນະ ເຊິ່ງມີຈຳນວນ 40 ຄົນ ກວມເອົາ 38.50 ສ່ວນຮ້ອຍ ແລະ ເດີນທາງມາຄົນດຽວ ແມ່ນມີຈຳນວນ ພຽງແຕ່ 9 ຄົນເຊິ່ງກວມເອົາ 8.70 ສ່ວນຮ້ອຍ ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ພາຫະນະໃນການເດີນທາງຂອງນັກທ່ອງທ່ຽວ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງຈຳປາສັກ ໂດຍເດີນທາງດ້ວຍລົດໃຫຍ່ສ່ວນຕົວ ເຊິ່ງມີຈຳນວນເຖິງ 65 ຄົນ ກວມເອົາອັດຕາສ່ວນ 62.50 ສ່ວນຮ້ອຍ, ຮອງລົງມາແມ່ນລົດຈັກສ່ວນຕົວ ເຫັນວ່າມີຈຳນວນ 19 ຄົນ ກວມເອົາ 18.30 ສ່ວນຮ້ອຍ, ສຳລັບລົດບໍລິສັດນຳທ່ຽວ ແມ່ນມີຈຳນວນ 9 ຄົນ ກວມເອົາ 8.70 ສ່ວນຮ້ອຍ, ເດີນທາງມາດ້ວຍລົດໂດຍສານ ເຊິ່ງມີຈຳນວນ 4 ຄົນ ກວມເອົາ 3.80 ສ່ວນຮ້ອຍ, ເດີນທາງດ້ວຍລົດເຊົ່າ/ລົດຕູ້ ມີຈຳນວນ 3 ຄົນ ກວມເອົາ 2.90 ສ່ວນຮ້ອຍ, ເດີນທາງດ້ວຍຍົນ ມີຈຳນວນ 2 ຄົນກວມເອົາ1.90 ສ່ວນຮ້ອຍ ແລະ ເດີນທາງມາດ້ວຍອື່ນໆ ແມ່ນເຫັນວ່າມີພຽງຈຳນວນ 2 ຄົນ ເຊິ່ງກວມເອົາ1.90 ສ່ວນຮ້ອຍ ຂອງຈຳນວນກຸ່ມຕົວຢ່າງທັງໝົດ.

- ຄ່າໃຊ້ຈ່າຍສະເລ່ຍຕໍ່ຄັ້ງຂອງນັກທ່ອງທ່ຽວ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງຈຳປາສັກ ມີຄ່າໃຊ້ຈ່າຍສະເລ່ຍຕໍ່ຄັ້ງ ໃນລະຫວ່າງ 1,500,001 – 2,500,000 ກີບ ມີຈຳນວນເຖິງ 54 ຄົນ ເຊິ່ງກວມເອົາອັດຕາສ່ວນ 51.90 ສ່ວນຮ້ອຍ, ຮອງລົງມາແມ່ນ ລາຍຈ່າຍສະເລ່ຍຕໍ່ຄັ້ງ ໃນລະຫວ່າງ 500,0001 - 1,500,000 ກີບ ເຊິ່ງມີຈຳນວນ 27

ຄົນ ກວມເອົາ 26.00 ສ່ວນຮ້ອຍ, ລາຍຈ່າຍໜ້ອຍກວ່າ 500,000 ກີບ ລົງມາ ເຫັນວ່າມີຈຳນວນ 18 ຄົນ ກວມເອົາ 17.30 ສ່ວນຮ້ອຍ ແລະ ລາຍຈ່າຍສະເລ່ຍຕໍ່ຄັ້ງ 2,500,000 ກີບ ຂຶ້ນໄປ ແມ່ນມີຈຳນວນ 5 ຄົນ ເຊິ່ງກວມອົາ 4.80 ສ່ວນຮ້ອຍ ຂອງຈຳນວນຜູ້ຕອບແບບສອບຖາມທັງໝົດ.

- ຂໍ້ມູນກ່ຽວກັບຄວາມຄິດເຫັນຕໍ່ແຮງຈູງໃຈເດີນທາງມາທ່ອງທ່ຽວແຂວງຈຳປາສັກ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງຈຳປາສັກ ມີແຮງຈູງໃຈເພາະມີການຄຸ້ມຄ່າໃນການເດີນທາງມາທ່ອງທ່ຽວ ເຊິ່ງມີຈຳນວນເຖິງ 71 ຄົນ ກວມເອົາອັດຕາສ່ວນ 68.30 ສ່ວນຮ້ອຍ, ພູມີອາກາດດີສະຖານທີ່ທ່ອງທ່ຽວສວຍງາມມີຈຳນວນເຖິງ 33 ຄົນ ກວມເອົາ 31.70 ສ່ວນຮ້ອຍ, ມີການອອກແບບຕົວເມືອງທີ່ສວຍງາມຈຶ່ງດູດໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວມີຈຳນວນເຖິງ 12 ຄົນກວມເອົາ 11.60 ສວ່ນຮ້ອຍ, ມີຄວາມສະຫງົບຄວາມປອດໄພ ເຮັດໃຫ້ນັກທ່ອງທ່ຽວຢາກມາທ່ອງທ່ຽວຈຳນວນເຖິງ 9 ຄົນ ກວມ ເອົາ 8.70 ສ່ວນຮ້ອຍ, ມີຄວາມຮັກສາສະພາບແວດລ້ອມທີ່ດີ ເຮັດໃຫ້ນັກທ່ອງທ່ຽວທີ່ມາທ່ຽວມີຈຳນວນເຖິງ 5 ຄົນກວມເອົາ 4.80 ມີຄວາມສະອາດສະຖານທີ່ທ່ອງທ່ຽວ/ສາທາລະນະ ເຫັນວ່າມີຈຳນວນ 3 ຄົນກວມເອົາ 25.90 ສ່ວນຮ້ອຍ, ຂອງຈຳນວນຜູ້ຕອບແບບສອບຖາມທັງໝົດ.

- ຄວາມເພິ່ງພໍໃຈຕໍ່ກັບການບໍລິການ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງຈຳປາສັກ ມີຄວາມເພິ່ງພໍໃຈຕໍ່ກັບການບໍລິການໃນການເດີນທາງມາທ່ອງທ່ຽວ ແລະ ການບໍລິການພາຍໃນບ້ານພັກໂຮງແຮມ ເຊິ່ງມີຈຳນວນ 49 ຄົນ ກວມເອົາອັດຕາສ່ວນ 47.10 ສ່ວນຮ້ອຍ, ການບໍລິການພາຍໃນສະຖານທີ່ທ່ອງທ່ຽວມີຈຳນວນ 43 ຄົນ ກວມເອົາ 43.10 ສ່ວນຮ້ອຍ, ການບໍລິການລົດເຊົ່າເພື່ອອຳນວຍຄວາມສະດວກຈຳນວນເຖິງ 8 ຄົນກວມເອົາ 7.70 ສ່ວນຮ້ອຍ, ການບໍລິການອາຫານເຄື່ອງດື່ມສະຖານທີ່ບັນເທີງມີຈຳນວນເຖິງ 4 ຄົນກວມເອົາ 3.90 ສ່ວນຮ້ອຍ ຂອງຈຳນວນຜູ້ຕອບແບບສອບຖາມທັງໝົດ.

- ເຫດຜົນທີ່ມາທ່ອງທ່ຽວແຂວງຈຳປາສັກ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມແຂວງຈຳປາສັກ ມີແຮງຈູງໃຈຍ້ອນວ່າແຫຼ່ງທ່ອງທ່ຽວແຂວງຈຳປາສັກມີຄ່າໃຊ້ຈ່າຍນ້ອຍ ເຊິ່ງມີຈຳນວນເຖິງ 58 ຄົນ ກວມເອົາອັດຕາສ່ວນ 55.80 ສ່ວນຮ້ອຍ, ສ່ວນຜູ້ທີ່ເຫັນວ່າເປັນສູນກາງທາງດ້ານເສດຖະກິດຂອງພາກໃຕ້ ເຊິ່ງມີຈຳນວນ 46 ຄົນ ກວມເອົາ 44.20 ສ່ວນຮ້ອຍ, ມີແຫຼ່ງທ່ອງທ່ຽວທີ່ເປັນມໍລະດົກໂລກຜາສາດຫີນວັດພູ ເຊິ່ງມີຈຳນວນເຖິງ 18 ຄົນ ກວມເອົາ 17.40 ສ່ວນຮ້ອຍ, ແຫຼ່ງທ່ອງທ່ຽວທີ່ຫຼາກຫຼາຍທຳມະຊາດປະຫວັດສາດ ແລະ ວັດທະນາທຳສະຖານທີ່ເກົ່າແກ່ການດຳລົງຊີວິດຢ່າງສະບາຍມີຈຳນວນເຖິງ 12 ຄົນ ກວມເອົາ 11.60 ສ່ວນຮ້ອຍ, ມີສະຖານທີ່ອຳນວຍຄວາມສະດວກຮ້ານອາຫານບັນ

ເຫິງ,ຮ້ານຂາຍເຄື່ອງ, ໂຮງໝໍ,ໂຮງຮຽນມີຈຳນວນເຖິງ 6 ຄົນກວມເອົາ 5.80 ສ່ວນຮ້ອຍ,ມີໂຮງແຮມ/ບ້ານພັກ/ຣີສອດທີ່ເໝາະສົມ ແລະ ສະດວກສະບາຍ ເຫັນວ່າມີຈຳນວນເຖິງ 5 ຄົນ ກວມເອົາ 4.80 ສ່ວນຮ້ອຍ,ມີເສັ້ນທາງໄປສະດວກພາຍໃນຕົວເມືອງ ແລະ ເຊື່ອມຈອດກັບທຸກແຂວງ ພາກໃຕ້ ເຊິ່ງມີຈຳນວນເຖິງ 5 ຄົນກວມເອົາ 4.80 ສ່ວນຮ້ອຍ ຂອງຈຳນວນຜູ້ຕອບແບບສອບຖາມທັງໝົດ.

**6.3 ການປະເມີນມູນຄ່າທາງເສດຖະກິດໂດຍວິທີຄ່າໃຊ້ຈ່າຍຈາກການເດີນທາງ**

- ການວິເຄາະຄ່າໃຊ້ຈ່າຍຈາກການເດີນທາງ

ຜົນວິເຄາະໃນຕາຕະລາງຂ້າງເທິງນີ້ ສາມາດນຳເອົາຄ່າດັ່ງກ່າວ ມາຄຳນວນຫາຄ່າໃຊ້ຈ່າຍຈາກການເດີນທາງທັງໝົດຂອງນັກທ່ອງທ່ຽວທີ່ມາທ່ຽວຊົມ ແຂວງຈຳປາສັກໄດ້ດັ່ງນີ້:

$$TCr = 1/-\beta$$

$$TCr = \frac{1}{-(-0.000000913)} = 1{,}095{,}290.25$$

TCr = 1,095,290.25 ກີບ/ຄັ້ງ

TC : ຕົ້ນທຶນລວມທີ່ນັກທ່ອງທ່ຽວໃຊ້ໃນການເດີນທາງໄປທ່ຽວ ແຂວງ ຈຳປາສັກ
r : ໝາຍເຖິງຈຳນວນຄັ້ງທີ່ນັກທ່ອງທ່ຽວໄປທ່ຽວ ແຂວງ ຈ□ປາສັກ
TCr : ໝາຍເຖິງຄ່າໃຊ້ຈ່າຍທັງໝົດຈາກການເດີນທາງທ່ອງທ່ຽວ ແຂວງຈຳປາສັກຕໍ່ 1 ຄັ້ງ

ຈາກຜົນການວິເຄາະຂໍ້ມູນ ຈາກຕາຕະລາງ 4.20 ຂ້າງເທິງສາມາດອະທິບາຍໄດ້ວ່າ: ປະເມີນຄ່າໃຊ້ຈ່າຍຈາກການເດີນທາງ ຫຼື ປະເມີນມູນຄ່າທາງເສດຖະກິດຂອງການທ່ອງທ່ຽວຢູ່ ແຂວງຈ□ປາສັກ ສາມາດປະເມີນໄດ້ຈາກການວິເຄາະຈຳນວນຄ່າໃຊ້ຈ່າຍທັງໝົດເທົ່າກັບ 1,095,290.25 ກີບ/ຄັ້ງ. ສະເພາະນັກທ່ອງທ່ຽວທີ່ຢູ່ພາຍໃນປະເທດ ແລະ ເຮົາສາມາດຕີມູນຄ່າຈາກການໃຊ້ຈ່າຍດັ່ງກ່າວໃຫ້ເປັນມູນຄ່າທາງເສດຖະກິດຂອງປະເທດໄດ້ເພື່ອເປັນການພັດທະນາເສດຖະກິດທາງດ້ານການທ່ອງທ່ຽວໃຫ້ມີລາຍໄດ້ເພີ່ມຂຶ້ນໃນແຕ່ລະປີເພື່ອເປັນເກນໃນການເກັບຄ່າທຳນຽມ ແລະ ການບໍລິການໃນອານາຄົດ.

**6.4 ຂໍ້ສະເໜີແນະນຳສຳລັບການປັບປຸງໃນອະນາຄົດ (ນັກທ່ອງທ່ຽວພາຍໃນ)**

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມ ແຂວງ ຈໍາປາສັກ ມີຂໍ້ສະເໜີແນະ ຄວນໃຫ້ມີສະຖານທີ່ນັ່ງພັກຜ່ອນ ເຊິ່ງມີຈໍານວນເຖິງ 49 ຄົນ ກວມເອົາອັດຕາສ່ວນ 47.10 ສ່ວນຮ້ອຍ, ຮອງລົງມາ ແມ່ນສະເໜີໃຫ້ມີການປັບປຸງຫ້ອງນໍ້າໃຫ້ສະອາດຈົບງາມ ເຊິ່ງມີຈໍານວນ 43 ຄົນ ກວມເອົາອັດຕາສ່ວນ 41.30 ສ່ວນຮ້ອຍ, ສະເໜີໃຫ້ເພີ່ມຄວາມເອົາໃຈໃສ່ໃນການຮັກສາຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍ ເຫັນວ່າມີຈໍານວນເຖິງ 8 ຄົນ ກວມເອົາ 7.70 ສ່ວນຮ້ອຍ ແລະ ສະເໜີໃຫ້ມີການປັບປຸງເສັ້ນທາງ / ປັບປຸງສະຖານທີ່ຈອດລົດ ເຊິ່ງມີຈໍານວນພຽງ 2 ຄົນກວມເອົາ 1.90 ສ່ວຍຮ້ອຍ, ໂດຍສໍາພາດຈາກຈໍານວນຜູ້ຕອບແບບສອບຖາມທັງໝົດ.

### 6.5 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ (ນັກທ່ອງທ່ຽວຕ່າງປະເທດ)

ກຸ່ມນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ອງທ່ຽວຢູ່ແຂວງຈໍາປາສັກ ເພດຊາຍແມ່ນຫຼາຍກວ່າເພດຍິງ ກວມເອົາ 51.4 ສ່ວນຮ້ອຍ, ສ່ວນຜູ້ຍິງແມ່ນກວມເອົາ 48.6 ສ່ວນຮ້ອຍ.

ນັກທ່ອງທ່ຽວທີ່ມີອາຍຸລະຫວ່າງ 20ປີ ກວມເອົາ 12.30 ສ່ວນຮ້ອຍ, 21- 30 ປີ ກວມເອົາ 66.40 ສ່ວນຮ້ອຍ, ນັກທ່ອງທ່ຽວທີ່ມີອາຍຸລະຫວ່າງ 31 - 40 ປີ ກວມເອົາ 12.30 ສ່ວນຮ້ອຍ, ນັກທ່ອງທ່ຽວທີ່ມີອາຍຸລະຫວ່າງ 41 - 50 ປີ ກວມເອົາ 4.10 ສ່ວນຮ້ອຍ, ແລະ ນັກທ່ອງທ່ຽວທີ່ມີອາຍຸລະຫວ່າງ 51 - 60 ປີ ກວມເອົາ 2.70 ສ່ວນຮ້ອຍ ແລະ ສ່ວນ 61 ປີຂຶ້ນໄປແມ່ນ ກວມເອົາ 2,10 ສ່ວນຮ້ອຍ.

- ສະຖານະພາບຂອງກຸ່ມນັກທ່ອງທ່ຽວ.

ນັກທ່ອງທ່ຽວທີ່ມີສະຖານະພາບໂສດແມ່ນໄດ້ເຂົ້າມາທ່ອງທ່ຽວຫຼາຍກວ່າໝູ່ ເຊິ່ງກວມເອົາ 84.25 ສ່ວນຮ້ອຍ , ນອກຈາກນັ້ນຍັງມີກຸ່ມນັກທ່ອງທ່ຽວທີ່ແຕ່ງງານແລ້ວກວມເອົາ 13.70 ສ່ວນຮ້ອຍ ແລະ ກຸ່ມນັກທ່ອງທ່ຽວທີ່ບໍ່ລະບຸສະຖານະພາບ ກວມເອົາ 2.05 ສ່ວນຮ້ອຍ.

- ລະດັບການສຶກສາສູງສຸດ

ສ່ວນໃຫ່ຍແມ່ນກຸ່ມນັກທ່ອງທ່ຽວ ທີ່ມີລະດັບການສຶກສາອະນຸປະລິນຍາໄດ້ເຂົ້າມາທ່ອງທ່ຽວເປັນຈໍານວນຫຼາຍກວມເອົາ 37.00 ສ່ວນຮ້ອຍ, ຕໍ່ມາແມ່ນກຸ່ມນັກທ່ອງທ່ຽວທີ່ມີລະດັບການສຶກສາປະລິນຍາຕີ ກວມເອົາ 20.50 ສ່ວນຮ້ອຍ, ກຸ່ມນັກທ່ອງທ່ຽວທີ່ມີລະດັບການສຶກສາມັດທະຍົມຕົ້ນ - ມັດທະຍົມປາຍ ກວມເອົາ 18.50 ສ່ວນຮ້ອຍ ແລະ ກຸ່ມນັກທ່ອງທ່ຽວທີ່ມີລະດັບການສຶກສາປະລິນຍາໂທຂຶ້ນໄປ ກວມເອົາ 2.70 ສ່ວນຮ້ອຍ.

ກຸ່ມນັກທ່ອງທ່ຽວທີ່ມີອາຊີບເປັນພະນັກງານສ່ວນຕົວ ໄດ້ເຂົ້າມາທ່ອງທ່ຽວຫຼາຍກວ່າໝູ່ ເຊິ່ງກວມເອົາ 30.8 ສ່ວນຮ້ອຍ, ກຸ່ມນັກທ່ອງທ່ຽວທີ່ມີອາຊີບເປັນນັກຮຽນ - ນັກສຶກສາ ກວມເອົາ 28.1 ສ່ວນຮ້ອຍ, ກຸ່ມນັກທ່ອງທ່ຽວທີ່ມີອາຊີບເປັນພະນັກງານເອກະຊົນກວມເອົາ 22.6 ສ່ວນຮ້ອຍ, ກຸ່ມນັກທ່ອງທ່ຽວທີ່ມີອາຊີບເປັນນັກທຸລະກິດກວມເອົາ

11 ສ່ວນຮ້ອຍ, ກຸ່ມນັກທ່ອງທ່ຽວທີ່ມີອາຊີບເປັນພະນັກງານລັດກວມເອົາ.34 ສ່ວນຮ້ອຍ ແລະ ກຸ່ມນັກທ່ອງທ່ຽວທີ່ມີອາຊີບອື່ນໆ ທີ່ບໍ່ໄດ້ລະບຸ ກວມເອົາ 4.1 ສ່ວນຮ້ອຍ.

- ລາຍໄດ້ຕໍ່ເດືອນຂອງນັກທ່ອງທ່ຽວ

ລາຍໄດ້ສະເລ່ຍຂອງນັກທ່ອງທ່ຽວຕໍ່ເດືອນ 500 – 1,000 ກວມເອົາ 13.70 ສ່ວນຮ້ອຍ, ລາຍໄດ້ສະເລ່ຍຂອງນັກທ່ອງທ່ຽວຕໍ່ເດືອນ 1,001 – 1,500 ກວມເອົາ 12.33 ສ່ວນຮ້ອຍ, ລາຍໄດ້ສະເລ່ຍຂອງນັກທ່ອງທ່ຽວຕໍ່ເດືອນ 1,501 – 2,000 ກວມເອົາ 24.66 ສ່ວນຮ້ອຍ, ລາຍໄດ້ສະເລ່ຍຂອງນັກທ່ອງທ່ຽວຕໍ່ເດືອນ 2,001 – 2,500 ກວມເອົາ 5.48 ສ່ວນຮ້ອຍ, ລາຍໄດ້ສູງສຸດເທົ່າກັບ 10,000 ໂດລາສະຫະລັດ, ລາຍຮັບຕ່ຳສຸດເທົ່າກັບ 500 ໂດລາສະຫະລັດ ແລະ ລາຍໄດ້ສະເລ່ຍຂອງນັກທ່ອງທ່ຽວຕໍ່ເດືອນ 2,060.71 ໂດລາສະຫະລັດ.

**6.6 ຂໍ້ມູນທົ່ວໄປກ່ຽວກັບການທ່ອງທ່ຽວ (ນັກທ່ອງທ່ຽວຕ່າງປະເທດ)**

ພົບວ່ານັກທ່ອງທ່ຽວສ່ວນໃຫຍ່ແມ່ນມາຈາກທະວີບຢູໂຣບກວມເອົາເຖິງ 78.77 ສ່ວນຮ້ອຍ ແລະ ຮອງລົງມາແມ່ນທະວີບອາເມລິກາກວມເອົາ 6.85 ສ່ວນຮ້ອຍ ແລະ ຮອງລົງມາແມ່ນທະວີບອາຊີກວມເອົາ 4.79 ສ່ວນຮ້ອຍ ແລະ ຮອງລົງມາແມ່ນທະວີບໂອເຊອາເນກວມເອົາ 2.74 ສ່ວນຮ້ອຍ ແລະ ນັກທ່ອງທ່ຽວບໍ່ໄດ້ລະບຸແຫຼ່ງທີ່ມາແມ່ນກວມເອົາ 6.85 ສ່ວນຮ້ອຍ.

- ຈຸດໝາຍປາຍທາງການເດີນທາງຂອງນັກທ່ອງທ່ຽວ

ພົບວ່ານັກທ່ອງທ່ຽວສ່ວນໃຫຍ່ ແມ່ນມີຄວາມສົນໃຈເຂົ້າມາທ່ຽວ ເພາະປະເທດລາວມີບ່ອນທ່ຽວຫລາຍທີ່ສວຍສົດງົດງາມ ອຸດົມສົມບູນທາງທຳມະຊາດ ແລະ ຮີດຄອງປະເພນີອັນດີງາມ. ເຊິ່ງເຮົາສາມາດລວບລວມຈຳນວນນັກທ່ອງທ່ຽວ ແຂວງຈຳປາສັກ ຈຳນວນ 119 ຄົນ ກວມເອົາ 81,50 ສ່ວນຮ້ອຍ, ຮອງລົງມາແມ່ນລຸ່ມແແມ່ນ້ຳຂອງຈຳນວນ 13 ຄົນ ກວມເອົາອັດຕາສ່ວນ 8,22 ສ່ວນຮ້ອຍ, ແລະ ອີກອີກພາກສ່ວນໜຶ່ງທີ່ສົນໃຈຢາກລົງມາທ່ຽວປະເທດອາຊຽນຈຳນວນ 14 ຄົນ ເຊິ່ງກວມເອົາອັດຕາສ່ວນ 9.59 ສ່ວນຮ້ອຍ.

- ໄລຍະເວລາຂອງການທ່ຽວທ່ຽວ

ເຫັນວ່ານັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ອງທ່ຽວ ແລະ ພັກຜ່ອນພົບເຫັນວ່າການເດີນທາງຂອງນັກທ່ອງທ່ຽວ ຈຳນວນ 73 ຄົນ ກວມເອົາເອົາອັດຕາສ່ວນ 50,00 ສ່ວນຮ້ອຍ, ໄລຍະເວລາ 1-5 ວັນ ຮອງລົງມາແມ່ນນັກທ່ອງທ່ຽວ 11-15ວັນ ຈຳນວນ 12 ຄົນ ກວມເອົາອັດຕາສ່ວນ 9.59 ສ່ວນຮ້ອຍ, ອີກຈຳນວນໜຶ່ງແມ່ນ 16-20 ວັນ ມີຈຳວນ 8 ຄົນ ກວມເອົາອັດຕາສ່ວນ 5.48 ສ່ວນຮ້ອຍ ແລະ ຕໍ່ລົງມານັກທ່ອງທ່ຽວມາຫຼາຍກວ່າ 20 ວັນຂຶ້ນໄປແມ່ນມີຈຳນວນ 39 ກວມເອົາອັດຕາສ່ວນ 26.71 ສ່ວນຮ້ອຍ.ແລະ ນັກທ່ອງທ່ຽວ 6-10 ວັນ ຈຳນວນ 21 ຄົນ ກວມເອົາອັດຕາສ່ວນ 8.22 ສ່ວນຮ້ອຍ.

- ລັກສະນະຂອງການທ່ອງທ່ຽວ

ເຫັນວ່າ ນັກທ່ອງທ່ຽວແມ່ນມີຄວາມຕັ້ງໃຈຢາກມາທ່ຽວພັກຜ່ອນພົບເຫັນວ່ານັກທ່ອງທ່ຽວຕັ້ງໃຈມາທ່ຽວ/ພັກຜ່ອນມີຈຳນວນ 129 ຄົນ ກວມເອົາອັດຕາສ່ວນ 88.36 ສ່ວນຮ້ອຍຮອງລົງມາແມ່ນເຫດອື່ນໆແມ່ນມາໃນນາມການທັດສະນະສຶກສາ ແລະ ການປະຊຸມ ຈຳນວນ 15 ຄົນ ເຊິ່ງກວມເອົາອັດຕາສ່ວນ 10.36 ສ່ວນຮ້ອຍ ແລະ ມາໃນນາມທຸລະກິດມີນັກທ່ອງທ່ຽວ ຈຳນວນ 2 ຄົນ ກວມເອົາອັດຕາສ່ວນ 1.37 ສ່ວນຮ້ອຍ.

- ທີ່ມາຂອງຂໍ້ມູນຂ່າວສານ

ຈາກການກວດໜັງສືພິມ-ວາລະສານ, ທາງອິນເຕີເນັດ ທີ່ບັນທຶກນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ອງທ່ຽວ ແລະ ພັກຜ່ອນພົບເຫັນວ່າການເດີນທາງຂອງນັກທ່ອງທ່ຽວສ່ວນໃຫຍ່ແມ່ນທາງອິນເຕີເນັດ ຈຳນວນ 128 ຄົນ ກວມເອົາອັດຕາສ່ວນ 55.90 ສ່ວນຮ້ອຍ, ຮອງລົງມາແມ່ນນັກທ່ຽວຮູ້ຂໍ້ມູນຈາກໝູ່ເພື່ອນ ຈຳນວນ 58 ກວມເອົາອັດຕາສ່ວນ 25.33 ສ່ວນຮ້ອຍ ແລະ ລົງມາແມ່ນມາຈາກໜັງສືພິມ/ວາລະສານ ຈ□ານວນ 16 ຄົນ ກວມເອົາອັດຕາສ່ວນ 11.35 ສ່ວນຮ້ອຍ ຮອງລົງມາແມ່ນນັກທ່ອງທ່ຽວໄດ້ຂໍ້ມູນຈາກໂທລະພາບ ຈຳນວນ 7ຄົນ ກວມເອົາອັດຕາສ່ວນ 3.06 ສ່ວນຮ້ອຍ ແລະໄດ້ຂໍ້ມູນແຫຼ່ງອື່ນໆ ຈຳນວນ 10 ຄົນ ກວມເອົາອັດຕາສ່ວນ 4.37 ສ່ວນຮ້ອຍ.

- ສະຖານທີ່ພັກເຊົາຂອງນັກທ່ອງທ່ຽວ

ສະແດງໃຫ້ເຫັນວ່າ ສະຖານທີ່ພັກເຊົາຂອງນັກທ່ອງທ່ຽວແມ່ນມີຄວາມປະທັບໃຈຫລາຍນັກທ່ອງທ່ຽວສ່ວນໃຫຍ່ພົບວ່າພັກເຊົາທີ່ບ້ານພັກ/ໂຮງແຮມຈຳນວນ 128 ກວມເອົາອັດຕາສ່ວນ 87.67 ສ່ວນຮ້ອຍ ແລະ ອື່ນໆ ມີຈຳນວນ 18 ຄົນ ກວມເອົາອັດຕາສ່ວນ 12.33 ສ່ວນຮ້ອຍ.

- ຮູບແບບການເດີນທາງ

ກຸ່ມທີ່ເດີນທາງເຂົ້າມາທ່ຽວທັງໝົດມີຈ□ານວນ 146 ໃນນັ້ນນັກທ່ອງທ່ຽວສ່ວນໃຫຍ່ ແມ່ນມາທ່ຽວຄົນດຽວມີຈຳນວນ 87 ຄົນ ເຊິ່ງກວມເອົາ 59.59 ສ່ວນຮ້ອຍ ແລະ ຮອງລົງມາ ແມ່ນນັກທ່ອງທຽວມາກັບໝູ່ເພື່ອນລວມມີຈຳນວນ 34 ເຊິ່ງກວມເອົາອັດຕາສ່ວນ 23.29 ສ່ວນຮ້ອຍ ແລະ ສຸດທ້າຍກໍຄືກຸ່ມນັກທ່ອງທ່ຽວທີ່ເດີນທາງມາກັບຄູ່ສົມລົດມີຈຳນວນ 25 ກວມເອົາອັດຕາສ່ວນ 17.12 ສ່ວນຮ້ອຍ.

- ພາຫະນະຂອງນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ອງທ່ຽວຢູ່ໃນແຂວງຈຳປາສັກນັກທ່ອງທ່ຽວສ່ວນໃຫຍ່ໃຊ້ພາຫະນະເດີນທາງເຂົ້າມາແມ່ນນັ່ງລົດໂດຍສານເຂົ້າມາ ມີຈຳນວນ 111 ຄົນ ກວມເອົາອັດຕາສ່ວນ 76.00 ສ່ວນຮ້ອຍ, ຮອງລົງມາແມ່ນກຸ່ມນັກທ່ອງທ່ຽວເຊົ່າລົດຈັກ ມີຈຳນວນ 22 ຄົນ, ກວມເອົາອັດຕາສ່ວນ 15.10 ສ່ວນຮ້ອຍ ສ່ວນນັກທ່ອງທ່ຽວທີ່ເຫຼືອແມ່ນໄດ້ເຊົ່າເອົາໃນການເດີນທາງທ່ອງທ່ຽວມີຈຳນວນ 13 ກວມເອົາ 8.90 ສ່ວນຮ້ອຍ.

- ນັກທ່ອງທ່ຽວເດີນທາງເຂົ້າມາທ່ຽວຄັ້ງທຳອິດໃນ ແຂວງ ຈຳປາສັກ.

ກຸ່ມນັກທ່ອງທ່ຽວເຂົ້າມາເທື່ອທຳອິດໃນ ແຂວງຈ□ປາສັກ ມີ 146 ຄົນ, ໃນນັ້ນແມ່ນເດີນທາງເຂົ້າມາທ່ອງທ່ຽວຄັ້ງທຳອິດໂດຍຜ່ານນະຄອນເຊ ມີຈຳນວນ 134 ຄົນ, ກວມເອົາອັດຕາສ່ວນ 91.80 ສ່ວນຮ້ອຍ ແລະ ມາທ່ຽວຄັ້ງທີ 2 ມີຈຳນວນ 12 ຄົນ ກວມເອົາອັດຕາສ່ວນ 8.20 ສ່ວນຮ້ອຍ.

- ຈຸດທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມໃນການທ່ອງທ່ຽວ

ກຸ່ມນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວທັງໝົດມີ 146 ຄົນ, ໃນນັ້ນພົບເຫັນວ່ານັກທ່ອງທ່ຽວສ່ວນໃຫຍ່ຈຸດທ່ອງທ່ຽວສີ່ພັນດອນ ມີຈຳນວນ 116 ຄົນ, ກວມເອົາອັດຕາສ່ວນ 32.86 ສ່ວນຮ້ອຍ, ຮອງລົງແມ່ນນັກທ່ອງທ່ຽວເດີນທາງເຂົ້າມາເລາະຊົມຕົວເມືອງ ມີຈຳນວນ 109 ຄົນ,ກວມເອົາອັດຕາສ່ວນ 30.88 ສ່ວນຮ້ອຍ, ຕໍ່ມາແມ່ນເມືອງປາກຊ່ອງ ແລະ ປະສາດຫີນ ວັດພູຈຳປາສັກ ທີ່ນັກທ່ອງທ່ຽວມັກເຂົ້າມາທ່ຽວນິຍົມໄປມີຈຳນວນ 42 ຄົນເທົ່າໆກັນ, ກວມເອົາອັດຕາສ່ວນ 11.90 ສ່ວນຮ້ອຍ, ຕໍ່ມາແມ່ນແຫຼ່ງທ່ອງທ່ຽວນໍ້າຕົກຕາດຜາສ້ວມ ມີຈຳນວນ 34 ເທື່ອຄົນ ກວມອັດຕາສ່ວນ 9.63 ສ່ວນຮ້ອຍ ແລະ ແຫຼ່ງທ່ອງທ່ຽວບຶງກຽດໂງ້ງ ເມືອງ ປະທຸມພອນ ມີຈຳນວນ 10 ຄົນ ກວມເອົາອັດຕາສ່ວນ 6.80 ສ່ວນຮ້ອຍ.

- ປະເມີນຄ່າໃຊ້ຈ່າຍຕໍ່ອັນ.

ການໃຊ້ຈ່າຍໃນຈ□ານວນຕ່າງໆ ຄື: ຄ່າໃຊ້ຈ່າຍໃນການເດີນທາງສູງສຸດແມ່ນ 100 ໂດລາສະຫະລັດ, ລາຍຈ່າຍຕໍ່າສຸດແມ່ນ 10 ໂດລາສະຫະລັດ ແລະ ລາຍຈ່າຍສະເລ່ຍຕໍ່ຄົນ 26.83 ຄົນຕໍ່ອັນ ແລະ ລາຍຈ່າຍທີ່ຕໍ່າກວ່າ 20 ໂດລາສະຫະລັດ ມີຈຳນວນ 67 ກວມເອົາອັດຕາສ່ວນ 45.89 ສ່ວນຮ້ອຍ, ຮອງລົງມາແມ່ນລາຍຈ່າຍຢູ່ລະຫວ່າງ 21-40 ໂດລາສະຫະລັດ ແມ່ນມີຈຳນວນ 62 ຄົນ ກວມເອົາອັດຕາສ່ວນ 42.47 ສ່ວນຮ້ອຍ ແລະ ລາຍຈ່າຍຫຼາຍກວ່າ 41 ໂດລາສະຫະລັດຂຶ້ນໄປ ມີຈຳນວນ 17 ຄົນ ກວມເອົາອັດຕາສ່ວນ 11.46 ສ່ວນຮ້ອຍ.

- ປະເພດຂອງການທ່ອງທ່ຽວ

ກຸ່ມນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວທັງໝົດມີ 146 ຄົນ ໃນນັ້ນມາທ່ຽວທຳມະຊາດ ມີຈຳນວນ 33 ຄົນ , ກວມເອົາ 22.60 ສ່ວນຮ້ອຍ, ຮອງລົງແມ່ນນັກທ່ອງທ່ຽວເຂົ້າມາທ່ຽວທາງວັດທະນະທຳ ມີຈຳນວນ 30 ຄົນ, ກວມເອົາ 22.55 ສ່ວນຮ້ອຍ, ຕໍ່ມາແມ່ນທາງປະຫວັດສາດຈຳນວນ 13 ຄົນ, ກວມເອົາ 8.90 ສ່ວນຮ້ອຍ ແລະ ກຸ່ມນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວລວມທັງສາມຢ່າງແມ່ນລວມຈຳນວນ 70ຄົນ ກວມເອົາ 47.26 ສ່ວນຮ້ອຍ.

### 4.7 ສາເຫດທີ່ເຮັດໃຫ້ເຂົາເຈົ້າມາທ່ຽວແຂວງຈຳປາສັກ (ນັກທ່ອງທ່ຽວຕ່າງປະເທດ)

- ສິ່ງທີ່ນັກທ່ອງທ່ຽວປະທັບໃຈທີ່ສຸດເວລາເຂົາເຈົ້າໄດ້ໄປ ແຂວງ ຈຳປາສັກ
    1. ສີ່ພັນດອນ (ດອນເດດ-ດອນຄອນ), ນໍ້າຕົກຕາດຄອນພະເພັງ - ສົມພະມິດ, ຄວາມສວຍງາມຂອງທຳມະຊາດ;
    2. ພູພຽງບໍລະເວນ ເມືອງປາກຊ່ອງ;

3. ມໍລະດົກໂລກປະສາດຫີນວັດພູຈຳປາສັກ;
4. ວັດທະນະທຳລາວ: ຄົນລາວເປັນມິດທີ່ດີ ແລະ ອື່ນໆ

- ສິ່ງທີ່ນັກທ່ອງທ່ຽວບໍ່ປະທັບໃຈທີ່ສຸດເວລາເຂົາເຈົ້າໄດ້ໄປແຂວງ ຈຳປາສັກ
  1. ສະພາບເສັ້ນທາງ/ ລົດໂດຍສານບໍ່ຕົງເວລາ, ບໍລິການບໍ່ດີ, ມີລາຄາ
  2. ແຫຼ່ງຂໍ້ມູນຂ່າວສານສຳລັບນັກທ່ອງທ່ຽວບໍ່ພຽງພໍ
  3. ຂີ້ເຫຍື້ອ (ຖົງຢາງ ແລະ ກະຕຸກພລັສຕິກ) ແລະ ການຄຸ້ມຄອງສິ່ງແວດລ້ອມຍັງບໍ່ໄດ້ດີ;
  4. ຍຸງຫຼາຍ ແລະ ອື່ນໆ

ສາເຫດທີ່ເຮັດໃຫ້ນັກທ່ອງທ່ຽວຕັດສິນໃຈມາທ່ຽວແຂວງ ຈຳປາສັກ

ສາເຫດທີ່ເຮັດໃຫ້ກຸ່ມນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວແຂວງ ຈຳປາສັກ ແມ່ນຂຶ້ນກັບຫຼາຍສາເຫດ ເຊິ່ງມີລາຍລະອຽດຕໍ່ໄປນີ້: ສາເຫດຫຼັກແມ່ນນັກທ່ອງທ່ຽວສ່ວນໃຫຍ່ເຫັນວ່າມີຄວາມສະຫງົບ ແລະ ຄວາມປອດໄພ ມີຈຳນວນ 136 ເທື່ອຄົນ, ກວມເອົາ 13.33 ສ່ວນຮ້ອຍ, ຮອງລົງມາແມ່ນ ກຸ່ມນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວສີ່ພັນດອນ (4000 ດອນ) ເປັນເຂດທີ່ນັກທ່ອງທ່ຽວໃຫ້ຄວາມສົນໃຈ ເປັນຈຳນວນ 128 ເທື່ອຄົນ ກວມເອົາອັດຕາສ່ວນ 12.55 ສ່ວນຮ້ອຍ, ຮອງລົງມາແມ່ນມີຄວາມເໝາະສົມໃນການເດີນທາງ ຈຳນວນ 127 ເທື່ອຄົນ ກວມເອົາ 12.45 ສ່ວນຮ້ອຍ, ຕໍ່ມາແມ່ນ ກຸ່ມນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວແມ່ນເຫັນມີຄວາມຫຼາກຫຼາຍດ້ານການທ່ອງທ່ຽວ ຈຳນວນ 112 ເທື່ອຄົນ, ກວມເອົາ 10.98 ສ່ວນຮ້ອຍ, ຕໍ່ມາກຸ່ມນັກທ່ອງທ່ຽວເຫັນວ່າ ມີການຄຸ້ມຄອງຈັດການສິ່ງແວດລ້ອມດີ ມີຈຳນວນ 99 ເທື່ອຄົນ ກວມເອົາ 9.71 ສ່ວນຮ້ອຍ, ກຸ່ມນັກທ່ອງທ່ຽວເຫັນວ່າ ຄວາມສວຍງາມຂອງທຳມະຊາດ ມີຈຳນວນ 87 ເທື່ອຄົນ ກວມເອົາ 8.53 ສ່ວນຮ້ອຍ, ເຫັນວ່າມີຄ່າໃຊ້ຈ່າຍ ຈຳນວນ 74 ເທື່ອຄົນ ກວມເອົາ 7.25 ສ່ວນຮ້ອຍ. ນອກຈາກນັ້ນ, ຍັງມີແຫຼ່ງທ່ອງທ່ຽວມໍລະດົກໂລດວັດພູຈ□າປາສັກ ແລະ ບໍ່ມີຄວາມແອອັດ / ນັກທ່ອງທ່ຽວບໍ່ຫຼາຍ ຈຳນວນ 65 ເທື່ອຄົນເທົ່າກັນ ກວມເອົາ 6.37 ສ່ວນຮ້ອຍ, ມີພູມອາກາດທີ່ດີ ຈຳນວນ 64 ເທື່ອຄົນ ກວມເອົາ 6.27 ສ່ວນຮ້ອຍ ແລະ ມີຄວາມເໝາະສົມໃນການຈັດຕັ້ງພິທີຕ່າງໆ ມີຈຳນວນ 63 ເທື່ອຄົນ ກວມເອົາ 6.18 ສ່ວນຮ້ອຍ.

- ການບໍລິການຂອງການທ່ຽວທ່ຽວ

ສະແດງໃຫ້ເຫັນວ່າ ການບໍລິການ ການທ່ອງທ່ຽວຢູ່ໃນທ້ອງຖິ່ນແມ່ນມີຄ່າ ຄະແນນສະເລ່ຍ 3.66 (SD=0.95) ແມ່ນມີຄວາມເພິ່ງພໍໃຈຫຼາຍ; ຮອງລົງມາແມ່ນການບໍລິການຢູ່ພາຍໃນໂຮງແຮມ/ບ້ານພັກຄະແນນສະເລ່ຍ 3.90 (SD=0.87) ແມ່ນມີຄວາມເພິ່ງພໍໃຈຫລາຍ; ຕໍ່ລົງມາອີກສິ່ງທີ່ອຳນວຍຄວາມສະດວກອາຫານ ແລະ ເຄື່ອງດື່ມ ຄະແນນສະເລ່ຍ 4.01 (SD=0.73) ແມ່ນມີຄວາມເພິ່ງພໍໃຈຫລາຍ ແລະ ສຸດທ້າຍ, ການບໍລິການລົດໂດຍສານ, ລົດເມ, ລົດເຊົ່າແມ່ນກວມຄະແນນສະເລ່ຍ 2.62 (SD=1.00) ໝາຍຄວາມວ່າ ມີຄວາມເພິ່ງພໍໃຈໃນລະດັບນ້ອຍ.

### 4.8 ບັນດາຂໍ້ສະເໜີແນະເພື່ອປັບປຸງການທ່ອງທ່ຽວໃນອະນາຄົດຂອງນັກທ່ອງທ່ຽວ

1. ປັບປຸງເສັ້ນທາງ, ປັບປຸງລະບົບຂົນສົ່ງໃຫ້ດີຂຶ້ນ ໂດຍສະເພາະຕາຕະລາງການແລ່ນລົດໂດຍສານ ແລະ ຕົງຕໍ່ເວລາ;
2. ປັບປຸງລະບົບຂໍ້ມູນຂ່າວສານສໍາລັບນັກທ່ອງທ່ຽວຜ່ານລະບົບອອນໄລໃຫ້ມີຄວາມຫຼາກຫຼາຍ ແລະ ສ້າງເປັນແອັບທຣິເຄເຊິ່ນ ເຊິ່ງນັກທ່ອງທ່ຽວສາມາດເຂົ້າເຖິງໄດ້;
3. ສະເໜີໃຫ້ມີການຝຶກອົບຮົມດ້ານການບໍລິການ ແລະ ດ້ານພາສາຕ່າງປະເທດ ໂດຍສະເພາະພາສາອັງກິດ;
4. ປັບປຸງການຄຸ້ມຄອງສິ່ງແວດລ້ອມ ເປັນຕົ້ນແມ່ນ ການກໍາຈັດຂີ້ເຫຍື້ອ ແລະ ລະບົບຣີຊາຍເຄີ້ນຄືນໃໝ່ ແລະ ລະບົບຮັກສາຄວາມສະອາດ;
5. ອໍານວຍຄວາມສະດວກໃນການແລກປ່ຽນເງິນຕາ ແລະ ເງິນກີບໃບນ້ອຍໃຫ້ພຽງພໍ;
6. ສົ່ງເສີມໃຫ້ອະນຸລັກວັດທະນະທໍາທີ່ມີຢູ່ ແລະ ສົ່ງເສີມໃຫ້ກາຍເປັນການທ່ອງທ່ຽວແບບອະນຸລັກ.

## ເອກະສານອ້າງອີງ


ຈຸລີລັດ ວົງຕະກຸນ. (1990). ການປະເມີນມູນຄ່າທາງສິ່ງແວດລ້ອມທາງທໍາມະຊາດ.ຄະນະເສດຖະສາດ ມະຫາວິທະຍາໄລ ຊຽງໃໝ່.

ໂສມສະກາວ. (1999:131). ການປະເມີນມູນຄ່າໂດຍການສຶກສາການປ່ຽນແປງຄ່າໃຊ້ຈ່າຍຂອງຜູ້ບໍລິໂພກ.ຄະນະກະເສດສາດ ມະຫາວິທະຍາໄລທໍາມະສາດ.

ບຸນມາ ເພັດສາວົງການ.(2016). ແຫຼ່ງທ່ອງທ່ຽວ ສປປລາວ ມີຄວາມສໍາຄັນຫຼາຍໃນການພັດທະນາຕາມແຜນເສດຖະກິດ-ສັງຄົມ ໄດ້ຮັບພຽງພໍຕໍ່ການແກ້ໄຂບັນຫາ.ການພັດທະນາແຫຼ່ງທ່ອງທ່ຽວ.

ອໍລະພອນ ສີເສົາວະລັກ.( 2009 ). ໄດ້ສຶກສາແນວທາງການປະເມີນມູນຄ່າທາງເສດຖະກິດຈາກຜົນກະທົບທາງດ້ານສິ່ງແວດລ້ອມເພື່ອສະໜັບສະໜູນຂະບວນການບຸດຕິທໍາ,ລາຍງານສະເໜີຕໍ່ສະຖາບັນວິໄຈລະພິພັນ ສໍານັກງານສານຍຸດຕິທໍາ.

Ahmed . Mahfuzuddin. Gloria Magnayon Umali. Chiew Kiook Chong, Mary Franz Rull, Marissa C. Garia 2007. Valuing recreational and conservation benefit of coral reefs-the case of Bolinao, Philiphines, Ocean and Coastal Managenment 50 (2007): 103-118. Haab, T. C. and K.E. ( 2002) . Valuing Environmental and Natural Resources: The Econometrics of Non-Market Valation, Edward Elgar: Cheltenham,UK.

Haab,T.C.and K.E.(2002). Valuing Environmental and Natural Resources:The Econometrics of Non-Market Valation,Edward Elgar:Cheltenham,UK.

McConnell.kenneth and lvar Strand.(1981).Measuring the cost of Time in Recreation Demand Analysis:Application to Sportfishing.American joumal of Agricultural Economics61:153-156.

S. Mohammadi Limaei, H. Ghesmati, R. Rashidi, and N.Yamini. (2014). Economic evaluation of natural forest park using the travel cost method (case study; Masouleh forest park, north of Iran). JOURNAL OF FOREST SCIENCE, 60, 2014 (6): 254–261.